ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 154 /ກຄສງ

ນະຄອນຫລວງວຽງຈັນ, ວັນທີ 17 FEB 2012

## ເງື່ອນໄຂ ແລະ ການປະກອບເອກະສານສ້າງຕັ້ງ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ

- ອີງຕາມ ຂໍ້ກຳນົດວ່າດ້ວຍການຄຸ້ມຄອງສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ສະບັບເລກທີ 04/ທຫລ, ລົງວັນທີ 20 ມິຖຸນາ 2008.

ກົມຄຸ້ມຄອງສະຖາບັນການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ທີ່ສົນໃຈຢາກສ້າງຕັ້ງ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຈະຕ້ອງປະຕິບັດເງື່ອນໄຂ ແລະ ການປະກອບເອກະສານສ້າງຕັ້ງ ດັ່ງລຸ່ມນີ້:

1. <u>ເງື່ອນໄຂ</u>
   1) ຕ້ອງເປັນບຸກຄົນ ຫລື ວິສາຫະກິດສ່ວນບຸກຄົນ, ວິສາຫະກິດຮຸ້ນສ່ວນ ແລະ ບໍລິສັດ ທີ່ຢູ່ພາຍໃຕ້ກົດໝາຍຂອງ ສປປ ລາວ;
   2) ຄຳຮ້ອງການຂໍສ້າງຕັ້ງ ຕ້ອງມີ: ຜູ້ຖືຮຸ້ນລິເລີ້ມຢ່າງໜ້ອຍ 05 ຄົນ ໃນນັ້ນຜູ້ຖືຮຸ້ນລາຍໃຫຍ່ (ຖືຮຸ້ນຫລາຍກວ່າ 20%) ໜຶ່ງຄົນ ຕ້ອງມີປະສົບການທາງດ້ານ ທະນາຄານ ແລະ ການເງິນຈຸລະພາກ ມາກ່ອນຢ່າງໜ້ອຍ 02 ປີ;
   3) ມີໂຄງຮ່າງການຈັດຕັ້ງ ຊຶ່ງປະກອບດ້ວຍ: ກອງປະຊຸມໃຫຍ່ຜູ້ຖືຮຸ້ນ, ສະພາບໍລິຫານ ແລະ ຜູ້ອຳນວຍການ;
   4) ມີທຶນຈົດທະບຽນ ຢ່າງໜ້ອຍ 01 ຕື້ກີບ.

2. <u>ການປະກອບເອກະສານ</u>
   1) ຄຳຮ້ອງ ຕາມແບບຟອມທີ່ ທຫລ ວາງອອກ;
   2) ໃບຢັ້ງຢືນຮັບເງິນຈາກ ກົມບໍລິການ ທຫລ ຈຳນວນ 01 ລ້ານກີບ (ຄ່າບໍລິການ) ຫລື ຕາມການປັບປຸງແປງຂອງ ທຫລ ໃນແຕ່ລະໄລຍະ;

3) ຮ່າງເນື້ອໃນສັນຍາສ້າງຕັ້ງ, ຮ່າງເນື້ອໃນກົດລະບຽບພາຍໃນຂອງ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍວິສາຫະກິດ;
4) ເອກະສານຢັ້ງຢືນວ່າມີທຶນພຽງພໍທີ່ຈະນຳມາຈົດທະບຽນຕ່ຳສຸດ 01 ຕື້ກີບ ຊຶ່ງທຶນດັ່ງກ່າວສາມາດນຳໃຊ້ໄດ້ໂດຍບໍ່ມີເງື່ອນໄຂ ຫລື ຂໍ້ຜູກມັດໃດໆ;
5) ລາຍຊື່ ແລະ ຈຳນວນ ຂອງຜູ້ຖືຮຸ້ນລິເລີ່ມ;
6) ຂໍ້ມູນທີ່ຈຳເປັນເພື່ອປະເມີນແຫລ່ງທີ່ມາຂອງທຶນ, ຄວາມພຽງພໍທາງດ້ານແຫລ່ງທຶນ ແລະ ປະຫວັດຂອງຜູ້ຖືຮຸ້ນລາຍໃຫຍ່;
7) ແຜນດຳເນີນທຸລະກິດ 05 ປີທຳອິດ;
8) ໃບຢັ້ງຢືນ ແລະ ແຜນວາດທີ່ຕັ້ງສຳນັກງານ ທີ່ເຊັນຮັບຮອງຈາກອຳນາດການປົກຄອງ;
9) ຊີວະປະຫວັດຂອງແຕ່ລະສະມາຊິກສະພາບໍລິຫານ ແລະ ຜູ້ຈັດການ;
10) ກໍລະນີຜູ້ຖືຮຸ້ນເປັນພະນັກງານ ຫລື ເຄີຍເປັນພະນັກງານຢູ່ອົງກອນອື່ນມາກ່ອນ ຕ້ອງປະກອບເອກະສານຢັ້ງຢືນຢ່າງເປັນລາຍລັກອັກສອນ;
11) ໃບແຕ່ງຕັ້ງມອບກຳມະສິດ ຜູ້ຕາງໜ້າພົວພັນວຽກງານນຳ ທະນາຄານແຫ່ງ ສປປ ລາວ.

**ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ**

ທະນາຄານ ແຫ່ງ ສປປ ລາວ
ກົມຄຸ້ມຄອງສະຖາບັນການເງິນ

ດຣ. ອາຄົມ ປຣະເສີດ